ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2929 /ຫອຄ.ກທຄວ

ນະຄອນຫລວງວຽງຈັນ,ວັນທີ30 ພະຈິກ 2018

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າ ນະຄອນຫລວງພະບາງ.

ເລື່ອງ: ແຕ່ງຕັ້ງພະນັກງານ ເຂົ້າຮ່ວມຝຶກອົບຮົມ ການຄຸ້ມຄອງ ແລະ ນຳໃຊ້ໂປຣແກຣມທະບຽນວິສາຫະກິດລວມສູນ(ເຊື່ອມຕໍ່ກັບສ່ວຍສາອາກອນ)

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດ ຢູ່ ສປປລາວ ສະບັບເລກທີ 02/ນຍ, ລົງວັນທີ 01/02/2018;

- ອີງຕາມບົດບັນທຶກມອບວຽກການພິມເລກປະຈຳຕົວຜູ້ເສຍອາກອນ ລະຫວ່າງ ກົມສ່ວຍສາອາກອນ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ລົງວັນທີ 15/10/2018;

ເພື່ອສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ຂະແໜງອຸດສາຫະກຳ ແລະ ການຄ້າ) ແລະ ກົມສ່ວຍສາອາກອນ (ຂະແໜງການເງິນ) ໄດ້ສ້າງລະບົບເຊື່ອມຕໍ່ຂໍ້ມູນທາງອີເລັກໂທຣນິກ ເພື່ອອອກເລກລະຫັດປະຈຳຕົວຜູ້ເສຍອາກອນໃຫ້ກັບວິສາຫະກິດ ພ້ອມກັບໃບທະບຽນວິສາຫະກິດ, ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດຢູ່ຂັ້ນກົມ,ພະແນກ ອຄ ນະຄອນຫລວງວຽງຈັນ ແລະ ຫ້ອງການ ອຄ 9ຕົວເມືອງ ໃນນະຄອນຫລວງວຽງຈັນ ນັບແຕ່ວັນທີ 15/10/2018 ເປັນຕົ້ນມາ ແລະຈະໄດ້ສືບຕໍ່ນຳໃຊ້ຢູ່ບັນດາຈຸດທີ່ອອກທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

ຫ້ອງການ ກະຊວງອຸດສາຫະກຳ ແລະການຄ້າ ຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ໃຫ້ແຕ່ງຕັ້ງເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ຮັບຜິດຊອບພິມໃບທະບຽນວິສາຫະກິດ ເຂົ້າຮ່ວມຝຶກອົບຮົມ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ໂປຣແກຣມທະບຽນວິສາຫະກິດລວມສູນ (ເຊື່ອມຕໍ່ກັບສ່ວຍສາອາກອນ) ລະອຽດມີ ດັ່ງນີ້:
   - ສະຖານທີ່: ຫ້ອງປະຊຸມ ກົມທະບຽນ ແລະຄຸ້ມຄອງວິສາຫະກິດ;
   - ຈຳນວນຜູ້ເຂົ້າຮ່ວມ: ແຂວງລະ 2 ທ່ານ;
   - ກຳນົດເວລາເຂົ້າຮ່ວມໄດ້ຄັດຕິດມາພ້ອມນີ້;
   - ຄ່າໃຊ້ຈ່າຍໃນການ: ກິນ, ຢູ່, ເດີນທາງ ແມ່ນໂຄງການ ADB ເປັນຜູ້ຮັບຜິດຊອບ.
2. ໃຫ້ນຳເອົາອຸປະກອນທີ່ກ່ຽວຂ້ອງກັບການນຳໃຊ້ໂປຣແກຣມ ມາພ້ອມໃນເວລາເຂົ້າຮ່ວມກອງປະຊຸມ ຕາມລາຍການດັ່ງນີ້:

Scanned with CamScanner

- ຂັ້ນແຂວງ/ນະຄອນຫລວງ: ຄອມພິວເຕີທີ່ໄດ້ຕິດຕັ້ງໂປຣແກຣມທະບຽນແລ້ວ 2 ໜ່ວຍ (A ແລະ B) ເອົາສະເພາະແຕ່ໜ່ວຍຄອມ ແລະສາຍສາກ (ບໍ່ເອົາຈໍ່ຄອມແລະອຸປະກອນອື່ນໆ);
- ຂັ້ນເມືອງ: ຄອມພິວເຕີ 1ໜ່ວຍ ທີ່ໄດ້ຕິດຕັ້ງລະບົບໂປຣແກຣມທະບຽນແລ້ວ ເອົາສະເພາະແຕ່ໜ່ວຍຄອມ ແລະສາຍສາກ(ບໍ່ເອົາຈໍ່ຄອມແລະອຸປະກອນອື່ນໆ));
- ເຄື່ອງຮັບສັນຍານອິນເຕີເນັດ ທີ່ສາມາດນຳໃຊ້ອິນເຕີເນັດໄດ້ປົກກະຕິ;
- ຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດໃໝ່ທີ່ກວດຜ່ານແລ້ວແຕ່ຍັງບໍ່ທັນໄດ້ພິມທະບຽນ ຈຳນວນ ຊຸດ ເພື່ອມາຮຽນຝຶກການນຳໃຊ້ໂປຣແກຣມໃໝ່.

3. ກ່ອນການນຳເອົາອຸປະກອນມາພ້ອມໃນເວລາເຂົ້າຮ່ວມຝຶກອົບຮົມ ຕ້ອງຮັບປະກັນໃຫ້ສຳເລັດ ການອອກໃບທະບຽນວິສາຫະກິດ, ເນື່ອງຈາກວ່າຕ້ອງໄດ້ຢຸດການນຳໃຊ້ໂປຣແກຣມເກົ່າທີ່ຜ່ານມາ ແລະ ຈະເລີ້ມນຳໃຊ້ລະບົບໂປຣແກຣມໃໝ່ ພາຍຫລັງໄດ້ຝຶກອົບຮົມເປັນຕົ້ນໄປ;

4. ໃຫ້ບັນດາພະແນກ ອຄ ແຂວງ ແນະນຳບັນດາຫ້ອງການ ອຄ ເມືອງ ທີ່ໄດ້ແບ່ງຄວາມຮັບຜິດຊອບໃນການຂຶ້ນທະບຽນວິສາຫະກິດ ກະກຽມອິນເຕີເນັດ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ລະບົບການຂຶ້ນທະບຽນວິສາຫະກິດລວມສູນ (ລະບົບໃໝ່) ໃຫ້ສຳເລັດໂດຍໄວ, ພາຍຫລັງມີອິນເຕີເນັດແລ້ວ ໃຫ້ສະເໜີຫາກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອຕິດຕັ້ງ ແລະ ຈັດຝຶກອົບຮົມການນຳໃຊ້ລະບົບດັ່ງກ່າວ;

5. ແຈ້ງການສະບັບນີ້ປ່ຽນແທນ ແຈ້ງການເລກທີ2627/ທອຄ.ກທຄວ, ລົງວັນທີ 26 ຕຸລາ 2018.

(ລະອຽດໄດ້ມີວາລະກອງປະຊຸມ ຄັດຕິດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການ

ທ.ບານສະຕິ ເທບພະວົງ

ຕິດຕໍ່ພົວພັນ:

- ທ. ບຸນຈັນ 02058589001
- ທ. ພອນເທວາ 02093210627

Scanned with CamScanner